ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

263 - - - - -

......................................

ກະຊວງຍຸຕິທຳ ເລກທີ........../ກຍ.ຫກ

ຫ້ອງການ ນະຄອນຫຼວງວຽງຈັນ, ວັນທີ 08 APR 2014

# ແຈ້ງການ

**ເຖິງ:** ບັນດາຫ້ອງການກະຊວງ, ອົງການທຽບເທົ່າ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ.

**ເລື່ອງ:** ສັງລວມເອົາບັນດາ ກົດໝາຍ ແລະ ນິຕິກຳ ເພື່ອນຳມາລົງໃນເວບໄຊຈົດໝາຍເຫດທາງລັດຖະການ.

- ອີງຕາມ ກົດໝາຍ ວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012;
- ອີງຕາມແຈ້ງການຂອງຫ້ອງວ່າການລັດຖະບານ ກ່ຽວກັບ ການຈັດຕັ້ງປະຕິບັດຈົດໝາຍເຫດທາງລັດຖະການ ເລກທີ 932/ຫລບ.ກລຂ, ລົງວັນທີ 26/6/2013;
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງຍຸຕິທຳ ເລກທີ 802/ກຍ, ລົງວັນທີ 05 ກັນຍາ 2013 ວ່າດວ້ຍການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການ.

ຫ້ອງການ ກະຊວງຍຸຕິທຳ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຫົວໜ້າຫ້ອງການ ກະຊວງ, ອົງການ ອ້ອມຂ້າງສູນກາງ ຊາບວ່າ: ໄລຍະຜ່ານມາໜ່ວຍງານຈົດໝາຍເຫດທາງລັດຖະການ ໄດ້ດຳເນີນການເອົາບັນດາກົດໝາຍ ແລະ ນິຕິກຳ ຂອງບັນດາອົງການຕ່າງໆ ທີ່ສະເໜີມາລົງໃນເວບໄຊ ໄດ້ຈຳນວນໜຶ່ງແລ້ວ ແລະ ມາຮອດປັດຈຸບັນ ເຫັນວ່າຫຼາຍພາກສ່ວນຍັງບໍ່ທັນໄດ້ເອົາໃຈໃສ່ນຳສະເໜີບັນດາກົດໝາຍ ແລະ ນິຕິກຳ ທີ່ຢູ່ໃນຄວາມຮັບຜິດຊອບຂອງຂະແໜງການຕົນ ມາລົງໃນເວບໄຊຈົດໝາຍເຫດທາງລັດຖະການ. ສະນັ້ນ, ເພື່ອຄວາມເປັນເອກະພາບ ຂໍໃຫ້ບັນດາທ່ານສັງລວມ ແລະ ນຳສົ່ງ ບັນດາກົດໝາຍ ແລະ ນິຕິກຳຕ່າງໆ ທີ່ມີຜົນບັງຄັບທົ່ວໄປ ເປັນຕົ້ນສະບັບ ທີ່ຢູ່ໃນຄວາມຮັບຜິດຊອບຂອງທ່ານ, ມາຍັງໜ່ວຍງານຈົດໝາຍເຫດທາງລັດຖະການ ເພື່ອເອົາລົງເວບໄຊຈົດໝາຍເຫດທາງລັດຖະການ ຊຶ່ງຈະເຮັດໃຫ້ບັນດາກົດໝາຍ ແລະ ນິຕິກຳດັ່ງກ່າວ ມີຜົນສັກສິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 80 ຂອງກົດໝາຍວ່າດ້ວຍ ການສ້າງນິຕິກຳ ແລະ ມາດຕາ 19 ຂອງຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງຍຸຕິທຳ ເລກທີ 802/ກຍ, ລົງວັນທີ 05 ກັນຍາ 2013.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ໃຫ້ການຮ່ວມມືດ້ວຍ.

ຫົວໜ້າຫ້ອງການ;

ຫມາຍເຫດ: ເອກະສານທີ່ຈະສົ່ງມາປະກອບມີ:

- ຕົ້ນສະບັບ 1 ສະບັບ;
- ສະບັບກອບປີ້ 1 ສະບັບ.

ສອບຖາມ: ໜ່ວຍງານຈົດໝາຍເຫດທາງລັດຖະການ, ກົມໄຂສະນາອົບຮົມກົດໝາຍ

856 21 454824

ວິລັດ ຜິວອ່ອນ